ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----=====000=====----

ສຳນັກງານ ຄຄຊ
ພະແນກຄຸ້ມຄອງຕະຫຼາດຫຼັກຊັບ

ນະຄອນຫຼວງວຽງຈັນ, ວັນທີ 5 ກຸມພາ 2015

ຮຽນ: ທ່ານ ຫົວໜ້າສຳນັກງານ ຄຄຊ ທີ່ນັບຖື,
(ໂດຍຜ່ານ ຄຳເຫັນຂອງ ທ່ານ ສຸລິສັກ ທຳນຸວົງ ຮອງຫົວໜ້າສຳນັກງານ ຄຄຊ)
ເລື່ອງ: ລາຍງານກ່ຽວກັບການຊື້-ຂາຍຮຸ້ນ EDL-GEN ໃນວັນທີ 2 ກຸມພາ 2015 ຢ່າງລະອຽດ.

- ອີງຕາມຜົນການຊື້-ຂາຍຮຸ້ນ EDL-GEN ໃນວັນທີ 2 ກຸມພາ 2015;
- ອີງຕາມທິດຊີ້ນຳຂອງ ທ່ານ ສຸລິສັກ ທຳນຸວົງ ຮອງຫົວໜ້າສຳນັກງານ ຄຄຊ ລົງວັນທີ 3 ກຸມພາ 2015,

ພະແນກຄຸ້ມຄອງຕະຫຼາດຫຼັກຊັບ ຂໍຮຽນລາຍງານມາຍັງທ່ານຊາບວ່າ: ການຊື້-ຂາຍຮຸ້ນ EDL-GEN ໃນວັນທີ 2 ກຸມພາ 2015 ໄດ້ບັນລຸເຖິງ 3,76 ລ້ານຮຸ້ນ, ຄິດເປັນມູນຄ່າ 26,38 ຕື້ກີບ ເຊິ່ງເປັນມູນຄ່າການຊື້-ຂາຍທີ່ສູງຫຼາຍເມື່ອທຽບໃສ່ການຊື້-ຂາຍຮຸ້ນດັ່ງກ່າວ (ສະເລ່ຍການຊື້-ຂາຍຮຸ້ນດັ່ງກ່າວຕໍ່ວັນເທົ່າກັບ 78.290 ຮຸ້ນ ຊຶ່ງນັບແຕ່ມື້ເປີດຕະຫຼາດ ຈົນເຖິງ ວັນທີ 30 ມັງກອນ 2015 ແລະ ສະເລ່ຍການຊື້-ຂາຍຮຸ້ນດັ່ງກ່າວຕໍ່ວັນເທົ່າກັບ 214.680 ຮຸ້ນ ນັບແຕ່ມື້ເປີດການແລກປ່ຽນຊື້-ຂາຍຮຸ້ນດ້ວຍການຈັບຄູ່ແບບຕໍ່ເນື່ອງ (Continue Auction) ຈົນເຖິງ ວັນທີ 30 ມັງກອນ 2015) ໄລຍະທີ່ຜ່ານມາ. ຕໍ່ການຊື້-ຂາຍທີ່ມີລັກສະນະຜິດທຳມະດາຄືດັ່ງກ່າວ, ທາງພະແນກໄດ້ຊອກຮູ້ຂໍ້ມູນຄືນ ແລະ ຜ່ານການຄົ້ນຄ້ວາ ຂໍ້ມູນເພີ່ມເຕີມຂອງຜູ້ລົງທຶນທີ່ເຂົ້າມາຊື້-ຂາຍຮຸ້ນ EDL-GEN ໃນວັນດັ່ງກ່າວ ຜົນປາກົດວ່າແມ່ນ ການເຄື່ອນໄຫວຂອງ ບັນຊີເລກທີ 1001 ເຊິ່ງເປັນເລກບັນຊີຂອງ ບໍລິສັດຫຼັກຊັບ KT ZMICO Securities Company Limit ປະເທດໄທ ໄດ້ເຂົ້າມາກວດຊື້ຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ( EDL-GEN ) ໃນລາຄາ 7.000 ກີບ ຊຶ່ງເປັນລາຄາທີ່ບໍ່ປ່ຽນແປງ ເມື່ອທຽບໃສ່ລາຄາປິດມື້ທີ່ຜ່ານມາ, ເປັນຈຳນວນ 3,51 ລ້ານຮຸ້ນ ແລະ ມີມູນຄ່າ 24,59 ຕື້ກີບ ກວມເອົາ 93,10% ຂອງມູນຄ່າການຊື້-ຂາຍທັງໝົດໃນມື້ດັ່ງກ່າວ, ໂດຍເປັນການເທຂາຍຮຸ້ນ ຂອງຜູ້ລົງທຶນ ປະເພດ ນິຕິບຸກຄົນ ຈາກປະເທດໄທ ເລກບັນຊີ 2284 ເຊິ່ງເປັນເລກບັນຊີຂອງ ບໍລິສັດຫຼັກຊັບ Phatra Capital Company ປະເທດໄທ ເຊິ່ງເທຂາຍຮຸ້ນອອກ ໃນລາຄາ 7.000 ກີບ ເປັນຈຳນວນ 3,74 ລ້ານຮຸ້ນ ແລະ ມີມູນຄ່າ 26,15 ຕື້ກີບ.

ການເຄື່ອນໄຫວຊື້-ຂາຍຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ (EDL-GEN) ຂອງ 2 ເລກບັນຊີດັ່ງກ່າວ ໃນໄລຍະ 1 ເດືອນທີ່ຜ່ານມາມີດັ່ງນີ້:

| ວັນທີ | ເລກບັນຊີ | ຊື້ | ຂາຍ | ຈຳນວນຮຸ້ນ | ມູນຄ່າເປັນກີບ |
|---|---|---|---|---|---|
| ວັນທີ 13 ມັງກອນ 2015 | 2284 | | ✓ | 2.056.258 | 14.496.168.900 |
| ວັນທີ 2 ກຸມພາ 2015 | 2284 | | ✓ | 3.741.400 | 24.599.323.000 |
| | 1001 | ✓ | | 3.514.189 | 26.154.765.000 |

ນັບແຕ່ວັນທີ 3 – 5 ກຸມພາ 2015 ທັງ 2 ບັນຊີດັ່ງກ່າວ ບໍ່ໄດ້ເຄື່ອນໄຫວຊື້-ຂາຍເລີຍ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

(ຮອງ) ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ